ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫຼວງພະບາງ

ຄະນະຊີ້ນຳວຽກງານການແຂ່ງຂັນ-ຍ້ອງຍໍ

ຮັກຊາດ ແລະ ພັດທະນາ

ເລກທີ 05 /ຈຂ-ຫຼບ

ຫຼວງພະບາງ,ວັນທີ..12..ມີນາ (3) 2018

**ຄຳແນະນຳ**

**ວ່າດ້ວຍການເປີດຂະບວນການແຂ່ງຂັນ-ຍ້ອງຍໍ**

**"ຮັກຊາດ ແລະ ພັດທະນາ" ທົ່ວແຂວງ**

**ເຖິງ :** ບັນດາທ່ານຫົວໜ້າພະແນກການ, ອົງການ, ກົມກອງ, ລັດວິສາຫະກິດ, ສະຖາບັນການສຶກສາຕ່າງໆ ວິທະຍາໄລ, ໂຮງຮຽນ, ໂຮງໝໍ ອ້ອມແຂວງ, ເຈົ້າເມືອງ ແລະ ອົງການປົກຄອງບ້ານ ທົ່ວແຂວງ

**ເລື່ອງ:** ແນະນຳ ກ່ຽວກັບ ເນື້ອໃນ, ຂັ້ນຕອນ ,ບາດກ້າວ ການເປີດຂະບວນການແຂ່ງຂັນ - ຍ້ອງຍໍ ຮັກຊາດ ແລະ ພັດທະນາ" ທົ່ວແຂວງ

- ອີງຕາມ ແຈ້ງການຂອງຄະນະຊີ້ນຳລະດັບຊາດ ສະບັບເລກທີ 01/ຄຊຂຍ,ລົງວັນທີ 22/6/2017 ວ່າດ້ວຍການສືບຕໍ່ຂະບວນການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ແລະ ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳວຽກງານແຂ່ງຂັນ-ຍ້ອງຍໍ "ຮັກຊາດ ແລະ ພັດທະນາ"
- ອີງຕາມ ຄຳສັ່ງຂອງທ່ານເຈົ້າແຂວງ ສະບັບເລກທີ 08/ຈຂ-ຫຼບ, ລົງວັນທີ 22 ພະຈິກ 2017 ວ່າດ້ວຍການຊີ້ນຳວຽກງານ ແຂ່ງຂັນ-ຍ້ອງຍໍ"ຮັກຊາດ ແລະ ພັດທະນາ" ຂັ້ນແຂວງ

ເພື່ອສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂະບວນການແຂ່ງຂັນ- ຍ້ອງຍໍ"ຮັກຊາດ ແລະ ພັດທະນາ" ເຊິ່ງແຂວງໄດ້ເປີດໃນວັນທີ 18 ກັນຍາ 2015 ຜ່ານມາ ໃຫ້ເຂົ້າສູ່ລວງເລິກ,ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ,ມີປະສິດທິຜົນ, ເປັນເອກະພາບ ແລະ ເປັນການກະຕຸກຊຸກຍູ້ສ້າງຂະບວນການຢ່າງຮອບດ້ານໃຫ້ຟົດຟື້ນຕໍ່ເນື່ອງທັງໃຫ້ເປັນຄວາມຮັບຜິດຊອບໂດຍກົງຂອງຄະນະພັກ, ອຳນາດການປົກຄອງແຕ່ລະຂັ້ນ ແລະ ກາຍເປັນໜ້າທີ່ຂອງທົ່ວປວງຊົນໃນທົ່ວແຂວງຫຼວງພະບາງ

**ປະທານຄະນະຊີ້ນຳ**

**ວຽກງານການແຂ່ງຂັນ-ຍ້ອງຍໍ "ຮັກຊາດ ແລະ ພັດທະນາ ຂັ້ນແຂວງ**

**ອອກຄຳແນະນຳດັ່ງນີ້:**

## I. ຈຸດປະສົງຄາດໝາຍ

1. ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຄຳສັ່ງ ສະບັບເລກທີ 08/ຈຂ-ຫຼບ, ລົງວັນທີ 22 ພະຈິກ 2017 ວ່າດ້ວຍການຊີ້ນຳວຽກງານແຂ່ງຂັນ-ຍ້ອງຍໍ "ຮັກຊາດ ແລະ ພັດທະນາ"ຂັ້ນແຂວງໃຫ້ເຂົ້າສູ່ລວງເລິກ;
2. ເພື່ອ ແນະນຳ ເນື້ອໃນ, ຂັ້ນຕອນ,ບາດກ້າວ ການເປີດຂະບວນການແຂ່ງຂັນ - ຍ້ອງຍໍ"ຮັກຊາດ ແລະ ພັດທະນາ"ທົ່ວແຂວງ;
3. ເພື່ອຫັນເອົາວຽກງານແຂ່ງຂັນ-ຍ້ອງຍໍເຂົ້າສູ່ລະບຽບເຮັດໃຫ້ການຍ້ອງຍໍຕິດພັນກັບຂະບວນແຂ່ງຂັນ,ຊຸກຍູ້ສົ່ງເສີມວຽກ

ດີເດັ່ນໂດຍຜ່ານຂະບວນການແຂ່ງຂັນທີ່ມີການຈັດຕັ້ງ, ມີເນື້ອໃນ ແລະ ຄາດໝາຍສູ້ຊົນຈະແຈ້ງ ແລະ ເປັນບ່ອນອີງໃຫ້ແກ່ການຄົ້ນຄວ້າຍ້ອງຍໍຖືກຕ້ອງຕາມຜົນງານຕົວຈິງ.

## II. ເນື້ອໃນ,ຂັ້ນຕອນ,ບາດກ້າວຂອງການເປີດຂະບວນການແຂ່ງຂັນ

### 1. ເນື້ອໃນຂໍ້ແຂ່ງຂັນ ຂອງແຕ່ລະຂັ້ນ ແຕ່ນີ້ຮອດ 2020

ການກຳນົດເນື້ອໃນຂໍ້ແຂ່ງຂັນແມ່ນມີຄວາມສຳຄັນຫຼາຍຕ້ອງອີງໃສ່ນະໂຍບາຍຂອງພັກ,ຄາດໝາຍສູ້ຊົນຂອງມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນວາງອອກ ແລະ ອີງໃສ່ໜ້າທີ່ການເມືອງ, ພາລະບົດບາດ,ໜ້າທີ່,ຄວາມຮັບຜິດຊອບຂອງພະແນກການ, ກົມກອງ, ທ້ອງຖິ່ນຂອງຕົນ ເພື່ອກຳນົດເປັນຂໍ້ແຂ່ງຂັນ ແລະ ຕ້ອງກຳແໜ້ນບາງບັນຫາຕົ້ນຕໍລຸ່ມນີ້:

**1) ພະແນກການ,ອົງການ,ກົມກອງ ຂັ້ນແຂວງ.**

ເນື້ອໃນຂໍ້ແຂ່ງຂັນສຳລັບພະແນກການ,ກົມກອງຂັ້ນແຂວງ ຕ້ອງອີງໃສ່ໜ້າທີ່ການເມືອງ,ພາລະບົດບາດຂອງພະແນກການ,ອົງການໂດຍສັງລວມເອົາເນື້ອໃນຂໍ້ແຂ່ງຂັນຂອງຂະແໜງການ,ກົມກອງທີ່ຂຶ້ນກັບພະແນກມາເປັນເນື້ອໃນຂໍ້ແຂ່ງຂັນຂອງພະແນກ ໂດຍມີການ ກຳນົດເນື້ອໃນ,ຄາດໝາຍສູ້ຊົນແຕ່ລະດ້ານລະອຽດຈະແຈ້ງ

**2) ຂັ້ນເມືອງ:**

- ບັນດາຫ້ອງການ,ອົງການຂັ້ນເມືອງກໍ່ຕ້ອງເອົາໃຈໃສ່ໜ້າທີ່ການເມືອງ,ພາລະບົດບາດ,ໜ້າທີ່ຄວາມຮັບຜິດຊອບຂອງຫ້ອງການ,ອົງການຂອງຕົນເພື່ອສັງລວມມາເປັນຂໍ້ແຂ່ງຂັນ;
- ພາຍຫຼັງບັນດາຫ້ອງການ,ອົງການຂັ້ນເມືອງສຳເລັດການແຂ່ງຂັນແລ້ວ,ຕ້ອງເອົາເນື້ອໃນຂໍ້ແຂ່ງຂັນຂອງເມືອງຕາມ 4 ຂົງເຂດວຽກງານຄື:ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;ດ້ານການພັດທະນາເສດຖະກິດ;ດ້ານວຽກງານວັດທະນະທຳ-ສັງຄົມ; ດ້ານການເມືອງ-ການປົກຄອງ.

**3) ຂັ້ນບ້ານ:**

- ສຳລັບຄອບຄົວ ຕໍ່ ຄອບຄົວໃຫ້ອີງໃສ່ 05 ມາດຖານການສ້າງຄອບຄົວພັດທະນາທີ່ໄດ້ກຳນົດໄວ້ໃນດຳລັດ 348/ລບ ເພື່ອກຳນົດເປັນຂໍ້ແຂ່ງຂັນ;
- ສຳລັບໜ່ວຍ ຕໍ່ ໜ່ວຍ, ໃຫ້ສັງລວມເອົາເນື້ອໃນຂໍ້ແຂ່ງຂັນຂອງຄອບຄົວມາເປັນຂໍ້ແຂ່ງຂັນຂອງໜ່ວຍ;
- ພາຍຫຼັງຄອບຄົວ ຕໍ່ ຄອບຄົວ, ໜ່ວຍ ຕໍ່ ໜ່ວຍສຳເລັດການແຂ່ງຂັນແລ້ວໃຫ້ເອົາເນື້ອໃນຂໍ້ແຂ່ງຂັນຂອງຄອບຄົວ,ຂອງໜ່ວຍມາສັງລວມເປັນຂອງບ້ານຕາມ 4 ຂົງເຂດວຽກງານຄື: ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;ດ້ານການພັດທະນາເສດຖະກິດ;ດ້ານວຽກງານວັດທະນະທຳ-ສັງຄົມ; ດ້ານການເມືອງ-ການປົກຄອງ;

### 2. ຂັ້ນຕອນ,ບາດກ້າວ ຂອງການເປີດຂະບວນການແຂ່ງຂັນ

ການເປີດຂະບວນການແຂ່ງຂັນ-ຍ້ອງຍໍ "ຮັກຊາດ ແລະ ພັດທະນາ" ຕ້ອງດຳເນີນໄປຕາມຂັ້ນຕອນ,ບາດກ້າວດັ່ງນີ້:

**ຂັ້ນຕອນທີ 1:** ການເປີດຂະບວນແຂ່ງຂັນຢູ່ຂັ້ນພະແນກການ,ອົງການ,ກົມກອງ ຂັ້ນແຂວງດຳເນີນໄປ 3 ບາດກ້າວ.

ບາດກ້າວທີ 1: ດ້ານການກະກຽມ

1. ແຕ່ງຕັ້ງຄະນະຮັບຜິດຊອບວຽກງານແຂ່ງຂັນ-ຍ້ອງຍໍຂັ້ນຂອງຕົນ;
2. ຂຽນຫົວຂໍ້ເນື້ອໃນຂໍ້ແຂ່ງຂັນ;
3. ຄົ້ນຄວ້າກຳນົດຄຳຂວັນສະເພາະທີ່ເໝາະສົມກັບພະແນກການ,ອົງການ,ກົມກອງຂອງຕົນ;
4. ສ້າງແຜນດຳເນີນງານ, ກຳນົດບາດກ້າວ, ຂັ້ນຕອນ, ວິທີຈັດຕັ້ງປະຕິບັດ;
5. ເອກະສານນິຕິກຳອື່ນໆທີ່ກ່ຽວພັນວຽກງານແຂ່ງຂັນ-ຍ້ອງຍໍ;
6. ກ່ອນຈະເປີດຂະບວນການແຂ່ງຂັນ ຕ້ອງອັດສຳເນົາເອກະສານທັງໝົດ 02 ຊຸດ ຈາກນັ້ນນຳໄປຂຶ້ນທະບຽນການແຂ່ງຂັນກັບພະແນກພາຍໃນແຂວງ, ເອກະສານຊຸດ 01 ສົ່ງໃຫ້ພະແນກພາຍໃນແຂວງ ເພື່ອຕິດຕາມ,ກວດກາ,ຊຸກຍູ້ ແລະ

ປະເມີນຜົນຕາມລະບຽບການ.

ບາດກ້າວທີ 2: ຈັດຕັ້ງເຜີຍແຜ່-ເຊື່ອມຊຶມ

1. ດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 121/ນຍ ວ່າດ້ວຍການເພີ່ມທະວີວຽກງານແຂ່ງຂັນ-ຍ້ອງຍໍໃນໄລຍະໃໝ່;.
2. ບົດແນະນຳ ຂອງປະທານຄະນະຊີ້ນຳວຽກງານແຂ່ງຂັນ-ຍ້ອງຍໍ"ຮັກຊາດ ແລະ ພັດທະນາ" ວ່າດ້ວຍການເປີດຂະບວນການແຂ່ງຂັນ-ຍ້ອງຍໍ"ຮັກຊາດ ແລະ ພັດທະນາ ທົ່ວແຂວງ ສະບັບເລກທີ....../ຈຂ-ຫຼບ,ລົງວັນທີ.....ມີນາ (3) 2018;
3. ແຜນດຳເນີນງານຂອງຄະນະຮັບຜິດຊອບວຽກງານແຂ່ງຂັນ-ຍ້ອງຍໍ " ຮັກຊາດ ແລະ ພັດທະນາ " ຂັ້ນຂອງຕົນ;
4. ຂໍ້ຕົກລົງສະບັບ ເລກທີ 21 /ຄຊຂຍ ,ລົງວັນທີ 20/11/2017 ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳແຂ່ງຂັນ-ຍ້ອງຍໍ "ຮັກຊາດ ແລະ ພັດທະນາ"ຂັ້ນແຂວງ;
5. ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບວຽກງານແຂ່ງຂັນ-ຍ້ອງຍໍ "ຮັກຊາດ ແລະ ພັດທະນາ"ຂັ້ນຂອງຕົນ;

ບາດກ້າວທີ 3: ຈັດຕັ້ງເປີດການແຂ່ງຂັນລະຫວ່າງຂະແໜງການ ກັບ ຂະແໜງການການທີ່ຂຶ້ນກັບພະແນກການ,ອົງການ,ກົມກອງຂັ້ນຂອງຕົນ

ຂັ້ນຕອນ 2 : ບັນດາຫ້ອງການ,ອົງການທຽບເທົ່າ ຂັ້ນເມືອງ ແລະ ຂັ້ນບ້ານແມ່ນຕ້ອງດຳເນີນ ໄປຕາມແຕ່ລະບາດກ້າວຄືກັບແຂວງ

- ສຳລັບບັນດາຫ້ອງການ, ອົງການອອ້ມຂ້າງເມືອງ ແລະ ບ້ານໃຫ້ສະເໜີໃຫ້ທ່ານເຈົ້າເມືອງເປັນຜູ້ແຕ່ງຕັ້ງຄະນະຮັບຜິດຊອບຂັ້ນຂອງຕົນ.
- ພາຍຫຼັງສຳເລັດດ້ານກະກຽມເອກະສານຕ່າງໆແລ້ວກ່ອນຈະເປີດຂະບວນການແຂ່ງຂັນ ຕ້ອງອັດສຳເນົາເອກະສານທັງໝົດເປັນ 02 ຊຸດ ຈາກນັ້ນນຳໄປຂຶ້ນທະບຽນການແຂ່ງຂັນກັບຫ້ອງການພາຍໃນເມືອງ,ເອກະສານຊຸດ 01 ສົ່ງໃຫ້ຫ້ອງການພາຍໃນເມືອງສຳເນົາ ເພື່ອຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນ ຕາມລະບຽບການ.

ຂັ້ນຕອນທີ 3 : ຕິດຕາມຊຸກຍູ້ຂະບວນການແຂ່ງຂັນ

- ຄະນະຊີ້ນຳ, ຄະນະຮັບຜິດຊອບວຽກງານ ແຂ່ງຂັນ-ຍ້ອງຍໍ"ຮັກຊາດ ແລະ ພັດທະນາ"ແຕ່ລະຂັ້ນຕ້ອງຊຸກຍູ້ຂະບວນການແຂ່ງຂັນຂັ້ນຂອງຕົນຕາມພາລະບົດບາດ,ສິດໜ້າທີ່ ຂອງຕົນ ແລະ ໃຫ້ຖືກຕ້ອງຕາມດຳລັດ 121/ນຍ ຕາມຂໍ້ແຂ່ງຂັນ ແລະ ຄາດໝາຍທີ່ກຳນົດໄວ້;
- ການຊຸກຍູ້ຂະບວນການແຂ່ງຂັນຂອງພາກສ່ວນຕ່າງໆດຳເນີນໄປຢ່າງຟົດຟື້ນ.

**ຂັ້ນຕອນທີ 4 : ການປະເມີນຜົນຂະບວນການແຂ່ງຂັນ**

- ການກວດກາການປະເມີນຜົນແມ່ນກວດຕາມຂໍ້ແຂ່ງຂັນຂອງວຽກງານແຕ່ລະດ້ານໄດ້ຕາມຄາດໝາຍ ຫຼື ລື່ນຄາດໝາຍ;
- ຊອກໃຫ້ເຫັນຈຸດອ່ອນ - ຂໍ້ຄົງຄ້າງຂອງວຽກງານແຕ່ລະດ້ານເພື່ອສືບຕໍ່ແກ້ໄຂ.

**ຂັ້ນຕອນທີ 5 : ຈັດຕັ້ງການສະຫຼຸບຖອດຖອນບົດຮຽນ**

- ສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ, ການແຂ່ງຂັນໃນແຕ່ລະໄລຍະພ້ອມທັງວາງທິດທາງແຜນການໃນຕໍ່ໜ້າ;
- ຄັດເລືອກບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນໃນຂະບວນການແຂ່ງຂັນ, ເພື່ອນຳສະເໜີຂຶ້ນເທິງພິຈາລະນາຍ້ອງຍໍ;
- ລາຍງານການຈັດຕັ້ງປະຕິບັດວຽກງານແຂ່ງຂັນ-ຍ້ອງຍໍໃຫ້ຄະນະນະຊີ້ນຳວຽກງານແຂ່ງຂັນ- ຍ້ອງຍໍຂັ້ນແຂວງເພື່ອລາຍງານໃຫ້ຄະນະນະຊີ້ນຳວຽກງານແຂ່ງຂັນ- ຍ້ອງຍໍລະດັບຊາດ.

**III.** ກຳນົດໄລຍະເວລາຈັດຕັ້ງປະຕິບັດ.

ການຈັດຕັ້ງເປີດຂະບວນການແຂ່ງຂັນຂອງແຕ່ລະຂັ້ນ, ໃຫ້ປະຕິບັດດັ່ງນີ້:

- ຂັ້ນແຂວງ,ຂັ້ນເມືອງ,ຂັ້ນບ້ານ ເລີ່ມເປີດເດືອນ 3/2018ເປັນຕົ້ນໄປ,ໃນທ້າຍເດືອນ08ຂອງທຸກໆປີຕ້ອງມີການປະເມີນຂະບວນການແຂ່ງຂັນຂອງແຕ່ລະຂັ້ນ, ຮອດທ້າຍປີ 2020ຈະມີການສະຫຼຸບແລະຍ້ອງຍໍຕາມຄວາມເໝາະສົມ.

**IV.** ກົນໄກ ແລະ ວິທີຈັດຕັ້ງປະຕິບັດ

1. ຄະນະພັກ, ອົງການປົກຄອງແຕ່ລະຂັ້ນ,ຕ້ອງຈັດຕັ້ງເຊື່ອມຊຶມຄຳແນະນຳສະບັບນີ້ໃຫ້ເຂົ້າໃຈຢ່າງເລິກເຊິ່ງ, ພ້ອມທັງເປັນເຈົ້າການກະກຽມ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມຈຸດປະສົງ,ຄາດໝາຍ,ເນື້ອໃນ ແລະ ບາດກ້າວຂັ້ນຕອນທີ່ໄດ້ກຳນົດໄວ້;
2. ພາຍຫຼັງທີ່ໄດ້ກະກຽມລະອຽດແລ້ວ, ໃຫ້ຈັດຕັ້ງເປີດຂະບວນການແຂ່ງຂັນຕາມກຳນົດເວລາ,ຖ້າເມືອງໃດ,ພະແນກການ,ກົມກອງໃດ ບໍ່ໄດ້ຂຶ້ນທະບຽນການແຂ່ງຂັນຈະບໍ່ພິຈາລະນາການຍ້ອງຍໍປະເພດຕ່າງໆ;
3. ການຈັດຕັ້ງການແຂ່ງຂັນແຕ່ລະຂັ້ນຕ້ອງມີການແຕ່ງຕັ້ງຄະນະຮັບຜິດຊອບຂະບວນການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ;
4. ຖ້າພະແນກການ,ກົມກອງ,ເມືອງຈະເປີດຂະບວນການແຂ່ງຂັນຂອງຕົນຕ້ອງເຊີນເອົາປະທານຄະນະຮັບຜິດຊອບແຂ່ງຂັນ-ຍ້ອງຍໍຂັ້ນແຂວງເປັນປະທານ ພ້ອມທັງເຊີນເປົ້າໝາຍທີ່ຈະຈັບຄູ່ແຂ່ງຂັນເຂົ້າຮ່ວມນຳ.
5. ພາຍຫຼັງໄດ້ຈັດຕັ້ງເປີດຂະບວນການແຂ່ງຂັນສຳເລັດແລ້ວໃຫ້ແຕ່ລະ ພະແນກການ,ກົມກອງ, ເມືອງ ຮີບຮ້ອນສະຫຼຸບລາຍງານການເປີດຂະບວນການແຂ່ງຂັນ;
6. ການຈັດຕັ້ງສະຫຼຸບຂະບວນການແຂ່ງຂັນໃຫ້ເລີ່ມແຕ່ໄລຍະເດືອນກັນຍາ ( 9 ) ຮອດເດືອນຕຸລາ ( 10 ) ຂອງທຸກໆປີແລ້ວສົ່ງບົດສະຫຼຸບລາຍງານໃຫ້ຄະນະຮັບຜິດຊອບແຂ່ງຂັນ-ຍ້ອງຍໍຂັ້ນແຂວງ (ພະແນກພາຍໃນ).
7. ຜ່ານການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ,ຕ້ອງມີການຊຸກຍູ້,ຕິດຕາມ,ກວດກາ,ການສະຫຼຸບຕີລາຄາຖອດຖອນບົດຮຽນ,ຄັດເລືອກບຸກຄົນ, ກົມກອງ ທີ່ດີເດັ່ນຢ່າງຖືກຕ້ອງກັບຜົນງານຕົວຈິງ,ບຸກຄົນ ແລະ ກົມກອງທີ່ມີຜົນງານດັ່ງກ່າວຕ້ອງຂຽນຜົນງານຂອງຕົນ,ເພື່ອສະເໜີຂັ້ນເທິງຍ້ອງຍໍແຕ່ລະຂັ້ນໃຫ້ທັນກັບກຳນົດເວລາຂອງການແຂ່ງຂັນ;
8. ກ່ຽວກັບງົບປະມານຮັບໃຊ້ໃນການເປີດຂະບວນການແຂ່ງຂັນແມ່ນໃຫ້ນຳໃຊ້ງົບປະມານຂອງຕົນເອງ,ບົນພື້ນຖານມີການປະຢັດມັດທະຍັດ ແລະ ຖືກຕາມລະບຽບການ.

ດັ່ງນັ້ນ, ປະທານຄະນະຊີ້ນຳວຽກງານການແຂ່ງຂັນ-ຍ້ອງຍໍ "ຮັກຊາດ ແລະ ພັດທະນາ" ແຂວງ ຈຶ່ງອອກຄຳແນະນຳສະບັບນີ້ມາຍັງບັນດາທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ເຈົ້າແຂວງຫຼວງພະບາງ**
**ປະທານຄະນະຊີ້ນຳ**
**ວຽກງານແຂ່ງຂັນ-ຍ້ອງຍໍ "ຮັກຊາດ ແລະ ພັດທະນາ"ຂັ້ນແຂວງ**

ຄຳຂັນ ຈັນທະວິສຸກ